


ໂຄງການເຝິກອົບຮົມນັກສື່ມວນຊົນ ( **2008-09)** **www.newsmekong.org**

ອິນເທີແພູສເຊີວິສ ອາຊີປາຊີຟິກ IPS ແລະ ອົງການ ໂພູບ ມີເດຍຟາວເດຊັນ PMFI ຂໍເຊື້ອເຊີນ ນັກຂ່າວ ໜັງສືພິມ, ນັກຖ່າຍຮູບ ແລະ ນັກຂ່າວໂທລະພາບ ສະໝັກ ໃນໂຄງການເຝິກອົບຮົມນັກສື່ມວນຊົນ ຮອບທີ 7 (2008-09) ພາຍໃຕ້ໂຄງການ“ສະເໜີພາບແມ່ຂອງ”. ໂຄງການປີນີ້ ໄດ້ເນັ້ນໜັກໃສ່ ການເບິ່ງການໄກ ໃນຂົງເຂດແມ່ນ້ຳຂອງໃນຍຸກໂລກາພິວັດ,ໂດຍສະເພາະແມ່ນສຸມໃສ່ປະເດັນຂ້າມຜ່ານຍ້ອນຜົນກະທົບຈາກ ການພັດທະນາ.

ໂຄງການ ສະເໜີພາບແມ່ຂອງ ແມ່ນ ເປີດໂອກາດໃຫ້ ນັກຂ່າວ ຈາກ ປະເທດກຳປູເຈຍ, ລາວ, ໄທ, ວຽດນາມ ແລະ ຈີນ ທັງໝົດ ຈຳນວນ 32 ຄົນ ໄດ້ຮັບທຶນເຝິກອົບຮົມ ໃນຮອບປີ 2008-09: ນັກຂ່າວ ສິ່ງພິມ ຈຳນວນ 12 ຄົນ, ນັກຖ່າຍຮູບ ຈຳນວນ 6 ຄົນ ແລະ ນັກຂ່າວໂທລະພາບ ຈຳນວນ 14 ຄົນ, ທັງຍິງ ແລະ ຊາຍ ທີ່ມີປະສົບການເຮັດວຽກດ້ານ ສື່ຢ່າງໜ້ອຍ 3 ປີຈະຖືກຄັດເລືອກ .

ໂຄງການ ສື່ “ສະເໜີພາບແມ່ຂອງ”(www.newsmekong.org) ແມ່ນ ປະສານງານໂດຍ ອິນເທີແພູສເຊີວິສ ອາຊີປາຊີຟິກ IPS ແລະ ອົງການ ໂພູບ ມີເດຍຟາວເດຊັນ PMFI ແລະ ໄດ້ຮັບການອຸປະຖຳໂດຍ ມູນນິທິລອັກກີເຟວເລີ (ອາຊີຕາເວັນອອກສຽງໃຕ້), ບາງກອກ, ປະເທດ ໄທ.

ໂຄງການດັ່ງກ່າວ ຊຸກຍູ້ ການວິເຄາະປະເດັນຂ້າມຜ່ານ ທີ່ມີຜົນກະທົບຕໍ່ການພັດທະນາຂອງ ຊຸມຊົນ ແລະ ປະເທດ ລ່ອງແມ່ນ້ຳຂອງ ໂດຍການນຳໃຊ້ສື່ມວນຊົນໃນຂົງເຂດ ທີ່ບໍ່ໄດ້ພຽງແຕ່ລາຍງານຂ່າວແບບ ດັ່ງເດີມທີ່ສຸມໃສ່ສະເພາະ ຂົງເຂດການເມືອງ ແລະ ລະດັບ ປະເທດ.

ບົດສະເໜີແຜນວຽກຕ້ອງສຸມໃສ່ປະເດັນຂ້າມຜ່ານຊາຍແດນໃນຫົວຂໍ້ໃດໜຶ່ງ(ທີ່ພົວພັນເຖິງສອງປະເທດໃນພາກພື້ນ). ບົດສະເໜີແຜນວຽກທີ່ຈະຖືກພິຈາລະນາເປັນພິເສດນັ້ນ ຄວນປະກອບມີຄວາມຫຼາກຫຼາຍຂອງຂໍ້ມູນ ທີ່ນຳສະເໜີ ຄຳເວົ້າແລະ ເລື່ອງລາວ ຈາກ ຫຼາຍພາກສ່ວນ ແລະ ຊຸມຊົນທີ່ແຕກຕ່າງກັນ ຮວມເຖິງກຸ່ມຄົນທີ່ຢູ່ຫ່າງໄກ.

ຜູ້ທີ່ຖືກຄັດເລືອກ ຈະມີຫົວຄິດປະດິດສ້າງ ໃນການ ຂຽນບົດຂ່າວ, ຖ່າຍພາບ ແລະ ຜະລິດສາລະຄະດີໃນຫົວຂໍ້ຕ່າງໆ ເຊິ່ງປະກອບມີ ການພົວພັນຕ່າງປະເທດ, ສຸຂະພາບ, ບົດບາດຍິງຊາຍ, ວັດທະນະທຳ ແລະ ຊົນເຜົ່າ, ເສດຖະກິດ ແລະ ສະພາຍແວດລ້ອມ, ແລະ ປະເດັນ ການເຊື່ອມໂຍງທາງດ້ານດເສດຖະກິດ.

ຂັ້ນຕອນຂອງໂຄງການປະກອບມີ:

- ການຄັດເລືອກຜູ້ສະໝັກ (ແບບຟອມສະໝັກແລະບົດສະເໜີໂຄງການມີ ເປັນພາສາ ອັງກິດ ແລະ ພາສາຂອງປະເທດແມ່ນ້ຳຂອງ ເຊິ່ງມີຢູ່ (www.newsmekong.org);
- ການສຳພາດ, ການຄົ້ນຄົ້ວຫາຂໍ້ມູນ ແລະ ສືບສວນ; ຜູ້ເຂົ້າຮ່ວມຈະໄດ້ເດີນທາງເຮັດບົດ ຂ່າວພາຍ ໃນປະເທດຂອງຕົນ ແລະ ປະເທດອື່ນໃນປະເທດແມ່ນ້ຳຂອງ;
- ການຂຽນ/ຜະລິດຂ່າວ ພາຍໃນໄລຍະ 5 ເດືອນ, ແລະ ສຳລັບ ນັກຂ່າວໂທລະພາບ ຈະໄດ້ເຂົ້າຮ່ວມການເຝິກອົບຮົມ ການຜະລິດສາລະຄະດີ ແລະໂທລະພາບ ທີ່ ນະຄອນຫຼວງ ມານີລາ ປະເທດຟີລິບປິນ.

ຜູ້ທີ່ຖືກຄັດເລືອກ ຈະໄດ້ເຂົ້າຮ່ວມ ຊຸດເຝິກອົບຮົບ 2 ຊຸດໃນພາກພື້ນ ການສຳມະນາ ພາກເປີດ (ສິງຫາ/ກັນຍາ 2008) ແລະ ການສຳມະນາ ພາກປິດ (ກຸມພາ 2009) ເຊິ່ງເປັນເວທີ ໃຫ້ແກ່ຜູ້ເຂົ້າຮ່ວມ ມາໂອ້ລົມວຽກທີ່ພວກເຂົາຜະລິດມາ.

## ຜົນໄດ້ຮັບ

**ນັກຂ່າວ ສື່ພິມ:** ນັກຂ່າວຈະໄດ້ຂຽນບົດເລື່ອງ ຢ່າງໜ້ອຍ 3000 ຄຳ ໃນໄລຍະເວລາໂຄງການ.
ນັກຖ່າຍຮູບ ແມ່ນຕ້ອງໄດ້ ຜະລິດ ບົດຄວາມ ປະກອບຮູບ ດ້ວຍ 900 ຄຳ ເຊິ່ງມີ15 ຮູບພາບ ຄຸນນະພາບ ທີ່ຖືກຄັດເລືອກຈາກ ຮູບທີ່ພວກເຂົາຖ່າຍ.

**ນັກຂ່າວໂທລະພາບ**: ຈະໄດ້ເຮັດວຽກເປັນ 2 ຫຼື 3 ກຸ່ມ ຜະລິດສາລະຄະດີ ທີ່ມີຄວາມຍາວ 15 ຫາ 20 ນາທີ ເພື່ອ ອອກອາກາດໃນສະຖານີຂອງພວກເຂົາ. ນັກຂ່າວອາດຈະຜະລິດເປັນບົດຂ່າວສັ້ນ 2 ນາທີ ເພື່ອອອກອາກາດ ອີກດ້ວຍ. ບົດສາລະຄະດີ ຈະມີ ໜັງສືແລ່ນຂຶ້ນເປັນພາສາອັງກິດ.

ຜູ້ສະໝັກ ສາມາດຂຽນ ບົດສະເໜີແຜນວຽກ ແລະ ເລື່ອງ ທີ່ຢາກລາຍງານ ເປັນພາສາຂອງຕົນເອງ. ພື້ນຖານຄວາມຮູ້ພາສາອັງກິດ ແມ່ນຈຳເປັນ ໃນຊຸດເຝິກອົບຮົມ ທີ່ຈະຈັດຂຶ້ນ ໃນ ຕອນຕົ້ນ ແລະ ຕອນສະຫຼຸບໂຄງການ.

## ຜູ້ສະໝັກຕ້ອງສົ່ງ:

- ແບບຟອມ ສະໝັກ ໂຄງການ “ສະເໜີພາບແມ່ຂອງ” 2008–09, ແລະ ບົດສະເໜີແຜນ ວຽກ ຢ່າງໜ້ອຍ 700 ຄຳ; ອະທິບາຍເຖິງຫົວຂໍ້ຂ້າມຜ່ານ ແລະ ຫຼາຍມູມມອງທີ່ແຕກ ຕ່າງ, ເປົ້າ ໝາຍ ທີ່ຈະຖືກສຳພາດ, ສະຖານທີ່ ທີ່ຈະໄປເຮັດວຽກໃນໂຄງການ ແລະ ຂໍ້ມູນລະອຽດອື່ນໆ.
- ຕິດຄັດຜົນງານ ບົດຂ່າວທີ່ມີຊື່ຜູ້ຂຽນ ໃນໜັງສືພິມ3 ບົດ (ສຳລັບນັກຂ່າວໜັງສືພິມ), ຜົນງານຖ່າຍພາບ ທີ່ໄດ້ຮັບການຕີພິມແລ້ວ 8 ພາບ (ສຳລັບນັກຖາຍພາບ) ຫຼື ຕົວຢ່າງ ວີດີໂອ ໃນຮູບແບບ VHS, VCD,

DVD ຫຼື mini DV ທີ່ໄດ້ອອກອາກາດໄປແລ້ວ ຈຳນວນ 2 ເລື່ອງ ທີ່ ຂຽນ, ກຳກັບ, ຖ່າຍທຳ ແລະ ຕັດຕໍ່ (ສຳລັບນັກຂ່າວໂທລະພາບ).

- ຢ່າງໜ້ອຍມີຜູ້ຮັບຮອງ ຫຼື ບ່ອນອ້າງອີງ ສອງບ່ອນ
- ຈົດໝາຍ ຈາກຫົວໜ້າບັນນາທິການ/ຫຼືຫົວໜ້າ ເພື່ອຮັບຮອງການສະໝັກໂຄງການ ແລະ ຢັ້ງຢືນວ່າຈະປະຕິບັດໂຄງການໃຫ້ສຳເລັດ.

## ປິດຮັບສະໝັກ ໃນວັນທີ 15 ມິຖຸນາ 2008.

ຂຽນ ແລະ ສົ່ງໃບສະໝັກໄປທີ່:

The Regional Director
'Imaging Our Mekong' c/o IPS Asia-Pacific
Unit 3A, 3rd Flr KSL Tower
503 Sri Ayutthaya Road,
Phayathai 10400 Bangkok, Thailand
Tel (66-2) 246 7877/78
Fax (66-2) 246 7876
Email: imagingourmekong@mac.com ຫຼື applications@newsmekong.org

ອິນເທີແພຼສເຊີວິສ ອາຊີປາຊີຟິກ IPS (www.ipsnewsasia.net) ເປັນອົງການຊ່ວຍເຫຼືອລ້າ, ແລະ ບໍ່ຫາກຳໄລ ທີ່ຜະລິດ ບົດຂ່າວທີ່ຈຳເປັນຕໍ່ປະເທດ ໃນຂົງເຂດອາຊີໃຕ້ ເຊິ່ງເປັນສ່ວນໜຶ່ງຂອງ ກຸ່ມ IPS ແລະ ຈັດຊຸດເຝິກອົບຮົມ ແລະ ພັດທະນາດ້ານສື່. ອົງການ ໂພຼບ ມີເດຍ ຟາວເດຊັນ (www.ipsnewsasia.net) ເປັນອົງການຊ່ວຍເຫຼືອລ້າ, ແລະ ບໍ່ຫາກຳໄລ ທີ່ມີຄວາມຕັ້ງໃຈປັບປຸງ ຄຸນນະພາບຂອງສື່, ໂດຍສະເພາະສື່ໂທລະທັດ ໃນອາຊີ ປາຊີຟິກ ໂດຍຜ່ານ ການເຝິກອົບຮົມນັກສື່ມວນຊົນ ໃຫ້ປະສົບຜົນສຳເລັດ ແລະ ເປັນ ມືອາຊີບ.

ດາວໂຫຼດ ແບບຟອມສະໝັກ/ບົດສະເໜີແຜນວຽກ ໃນພາສາ ຂອງປະເທດລ່ອງແມ່ນ້ຳຂອງໄດ້ຈາກ ***www.newsmekong.org***.